| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ | |
| ປະເພດຂອງໃບອະນຸຍາດ | ໃບຢັ້ງຢືນ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoST-IPD-20 | 31.12.2017 | ກົມຊັບສິນທາງປັນຍາ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | ທຸກພາກສ່ວນ |
| ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ | ຈົດທະບຽນເພື່ອໄດ້ຮັບການປົກປ້ອງສິດເຄື່ອງໝາຍການຄ້າ ທີ່ຕົນສ້າງຂຶ້ນ ພາຍໃຕ້ກົດໝາຍ ຂອງ ສປປ ລາວ ແລະ ພາຍໃນຂອບເຂດທົ່ວ ສປປ ລາວ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ຜູ້ເປັນເຈົ້າຂອງ ເຄື່ອງໝາຍການຄ້າ ຊຶ່ງໝາຍເຖິງ ເຄື່ອງໝາຍ ທີ່ນໍາໃຊ້ກັບສິນຄ້າ ຫລື ການບໍລິການ ເພື່ອເປັນການຈໍາແນກ ລະຫວ່າງ ສິນຄ້າ ຫລື ການບໍລິການນີ້ ກັບສິນຄ້າ ແລະ ການບໍລິການອື່ນ ແລະ ເປັນຜູ້ທີ່ມີຈຸດປະສົງຈະໄດ້ຮັບການປົກປ້ອງ ເຄື່ອງໝາຍການຄ້າ ດັ່ງກ່າວ ໃນຂອບເຂດ ສປປ ລາວ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | www.most.gov.la |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | 1. ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ຢູ່ຕ່າງປະເທດ ຊຶ່ງມີຈຸດປະສົງຂໍຈົດທະບຽນຊັບສິນທາງປັນຍາ ຢູ່ ສປປ ລາວ ຕ້ອງໄດ້ມີຕົວແທນ ທີ່ຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ ເພື່ອດໍາເນີນທຸລະກໍາ ທີ່ກ່ຽວຂ້ອງກັບ ວຽກງານຊັບສິນທາງປັນຍາ ຢູ່ ສປປ ລາວ 2. ສໍານວນຄໍາຮ້ອງຂໍຈົດທະບຽນ ແລະ ເອກະສານຄັດຕິດອື່ນໆ ສາມາດເຮັດເປັນພາສາລາວ ຫລື ອັງກິດກໍ່ໄດ້. ຖ້າວ່າ ຄໍາຮ້ອງຂໍ ຫລື ເອກະສານ ທີ່ໄດ້ເຮັດເປັນພາສາອັງກິດ, ຕ້ອງຍື່ນສະບັບແປ ເປັນພາສາລາວ ໂດຍໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ ພາຍໃນ 90 ວັນຫລັງຈາກວັນໄດ້ຍື່ນຄໍາຮ້ອງຂໍ 3. ເມື່ອມີການຈົດທະບຽນເຄື່ອງໝາຍການຄ້າແລ້ວ ບຸກຄົນທີສາມທີ່ສົນໃຈ |

| ຂໍ້ມູນພື້ນຖານ | |
|---|---|
| | ສາມາດສະເໜີຮ້ອງຂໍຄັດຄ້ານ ຫລື ຍົກເລີກ ກ່ຽວກັບ ການຈົດທະບຽນດັ່ງກ່າວ ພາຍໃນກຳນົດ 5 ປີ ນັບແຕ່ວັນພິມເຜີຍແຜ່ ໃນຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄຳຮ້ອງ ໃນການອອກໃບອະນຸຍາດ | 300 | |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ເງື່ອນໄຂຂອງເຄື່ອງໝາຍທີ່ຈະໄດ້ຮັບໃບຢັ້ງຢືນ ມີດັ່ງນີ້: (i) ເຄື່ອງໝາຍອາດເປັນສັນຍາລັກໃດໜຶ່ງ ຫລື ຫລາຍສັນຍາລັກລວມກັນ ທີ່ສາມາດຈຳແນກສິນຄ້າ ຫລື ການບໍລິການ ຂອງບໍລິສັດໃດໜຶ່ງ ແຕກຕ່າງຈາກບໍລິສັດອື່ນ; (ii) ເຄື່ອງໝາຍທີ່ບໍ່ຄືກັນກັບເຄື່ອງໝາຍການຄ້າ, ເຄື່ອງໝາຍທີ່ມີຊື່ສຽງ ຫລື ແຫລ່ງກຳເນີດທີ່ໄດ້ຈົດທະບຽນກ່ອນແລ້ວ ສຳລັບ ສິນຄ້າ ຫລື ການບໍລິການ ອັນດຽວກັນ; (iii) ເຄື່ອງໝາຍ ທີ່ບໍ່ຄ້າຍຄືກັນ ກັບ ເຄື່ອງໝາຍການຄ້າ ທີ່ໄດ້ຈົດທະບຽນກ່ອນໜ້ານີ້ ຫລື ເຄື່ອງໝາຍທີ່ມີຊື່ສຽງ ສຳລັບ ສິນຄ້າ ຫລື ການບໍລິການ ອັນດຽວກັນ, ຄ້າຍຄືກັນ ຫລື ກ່ຽວຂ້ອງກັນ ຊຶ່ງການນຳໃຊ້ເຄື່ອງໝາຍດັ່ງກ່າວ ອາດຈະພາໃຫ້ເກີດຄວາມສັບສົນ ເຖິງແຫລ່ງທີ່ມາຂອງສິນຄ້າ ຫລື ການບໍລິການ ຫລື ສ້າງຄວາມເຂົ້າໃຈຜິດວ່າ ເຄື່ອງໝາຍນັ້ນ ກ່ຽວຂ້ອງກັນ ຫລື ກ່ຽວພັນກັບຜູ້ອື່ນ; (iv) ເຄື່ອງໝາຍທີ່ບໍ່ມີລັກສະນະຕ້ອງຫ້າມ ຕາມມາດຕາ 23 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ; 2. ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງສິດ ມີດັ່ງນີ້: (i) ເປັນພົນລະເມືອງລາວ ຫລື ຜູ້ທີ່ມີທີ່ຢູ່ອາໄສ ຢູ່ ສປປ ລາວ ຫລື ນິຕິບຸກຄົນ ຫລື ການຈັດຕັ້ງທີ່ສ້າງຕັ້ງຂຶ້ນ ພາຍໃຕ້ກົດໝາຍຂອງ ສປປ ລາວ; (ii) ບຸກຄົນທີ່ມີສັນຊາດ ຫລື ມີທີ່ຢູ່ອາໄສຢູ່ ປະເທດໃດໜຶ່ງ ຊຶ່ງເປັນພາຄີຂອງສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກຳ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ; (iii) ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ມີສະຖານທີ່ດຳເນີນການຄ້າ ແລະ ອຸດສາຫະກຳຕົວຈິງ ແລະ ມີປະສິດທິຜົນ ຢູ່ໃນອານາເຂດຂອງປະເທດໃດໜຶ່ງ ທີ່ເປັນພາຄີຂອງ ສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກຳ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ປະຕິເສດການຈົດທະບຽນ ກໍລະນີ ເຄື່ອງໝາຍ ທີ່ບໍ່ມີລັກສະນະຕ້ອງຫ້າມ ຕາມກົດໝາຍ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ |
|---|

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 120 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | ເມື່ອຄົບກໍານົດແລ້ວ, ສາມາດຕໍ່ອາຍຸ ເທື່ອລະ 10 ປີ ໄດ້ຕະຫລອດໄປ; ພາຍໃຕ້ເງື່ອນໄຂທີ່ວ່າ ເພື່ອຮັກສາອາຍຸການປົກປ້ອງນັ້ນ, ເຈົ້າຂອງເຄື່ອງໝາຍການຄ້າ ຕ້ອງຈ່າຍຄ່າທໍານຽມລ່ວງໜ້າ ເທື່ອລະ 10 ປີ |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມຄໍາ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 300000.00 | 800000.00 | 20000.00 | 1120000.00 |
| **ຄໍາເຫັນ** | ອີງຕາມ ຄໍາແນະນໍາຂອງເຈົ້າໜ້າທີ່ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 300000.00 | 800000.00 | 20000.00 | 1120000.00 |
| **ຄໍາເຫັນ** | ອີງຕາມ ຄໍາແນະນໍາຂອງເຈົ້າໜ້າທີ່ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄໍາເຫັນ** |
| ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ (ສະບັບປັບປຸງ) | 01/ສພຊ | 20.12.2011 | ພາກທີ III ຊັບສິນອຸດສາຫະກໍາ ໝວດທີ 1 ເງື່ອນໄຂຂອງຊັບສິນອຸດສາຫະກໍາ (ມາດຕາ 16) ໝວດທີ 2 ຊັບສິນອຸດສາຫະກໍາທີ່ບໍ່ສາມາດຈົດທະບຽນ (ມາດຕາ 23) ໝວດທີ 3 |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| | | | ການປົກປ້ອງຊັບສິນອຸດສາຫະກໍາ (ມາດຕາ 26, 27, 31, 37 ຫາ 41) ໝວດທີ 5 ອາຍຸການປົກປ້ອງຊັບສິນອຸດສາຫະກໍາ (ມາດຕາ 51) |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ໃບຢັ້ງຢືນການຊໍາລະຄ່າທໍານຽມ |
| ບັດສັງເຂບ |
| ຮູບແຕ້ມ |
| ໜັງສືມອບສິດ |
| ໃບຄໍາຮ້ອງ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| **ປີ** | **ອອກໃໝ່** | **ຕໍ່ອາຍຸ** |
| 2016 | 2389 | 1334 |